# ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທຳລາຍປ່າໄມ້ (CliPAD)

## ສະພາບການ

ສ.ປ.ປ. ລາວ ເປັນໜຶ່ງໃນບັນດາປະເທດ ທີ່ມີອັດຕາຄວາມປົກຫຸ້ມຂອງປ່າໄມ້ສູງທີ່ສຸດ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ເຊັ່ນ: ນ້ຳ ແລະ ແຮ່ທາດຕ່າງໆ. ປະຊາກອນຫລາຍກວ່າ 70% ດຳລົງຊີວິດຢູ່ໃກ້ກັບປ່າໄມ້ ແລະ 20% ຂອງການດຳລົງຊີວິດຂອງພວກເຂົາທີ່ຕ້ອງອາໄສການຊົມໃຊ້ປ່າໄມ້. ເຖິງຢ່າງໃດກໍຕາມ, ນັບຕັ້ງແຕ່ຊຸມປີ 1960 ເປັນຕົ້ນມາ, ປ່າໄມ້ ໄດ້ຫລຸດລົງຢ່າງຫລວງຫລາຍເນື່ອງຈາກມີການຜະລິດກະສິກຳ, ການພັດທະນາພື້ນຖານໂຄງລ່າງ ແລະ ການນຳໃຊ້ໄມ້ໃນທາງທີ່ຜິດ, ເຊິ່ງກວມເອົາ 78% ຂອງການປ່ອຍທາດອາຍເຮືອນແກ້ວ ໃນທົ່ວປະເທດ ແລະ ເປັນໄພຂົ່ມຂູ່ຕໍ່ຊີວະນາໆພັນ ແລະ ການດຳລົງຊີວິດ. ເພື່ອແກ້ໄຂບັນຫາດັ່ງກ່າວ, ລັດຖະບານລາວ ໄດ້ນຳສະເຫນີ ເປົ້າຫມາຍສູງສຸດຂອງ ແຜນງານການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແຫ່ງຊາດ (NDC), ການຫ້າມສົ່ງອອກໄມ້, ກົດໝາຍປ່າໄມ້ສະບັບປັບປຸງໃຫມ່, ແລະ ວຽກງານການຫລຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ຂະໜາດໃຫຍ່. ໂຄງການດັ່ງກ່າວຈັດຕັ້ງປະຕິບັດຢູ່ 6 ແຂວງເປົ້າໝາຍພາກເຫນືອ, ກວມເອົາຫລາຍກວ່າ 40% ຂອງ ພື້ນທີ່ ທີ່ມີການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຂອງ ລາວພາຍໃນ 15 ປີທີ່ຜ່ານມາ.

## ຈຸດປະສົງ

ສ.ປ.ປ. ລາວ ປະສົບຜົນສຳເລັດໃນການຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມດ້ວຍການສົ່ງເສີມ ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ສະຫນັບສະຫນູນ ການອະນຸລັກ ແລະ ການເພີ່ມມວນທາດກາກບອນປ່າໄມ້.



ທົ່ງນາຢູ່ທາງພາກເຫນືອຂອງ ສປປ ລາວ: ກະສິກຳແບບຍືນຍົງປະກອບສ່ວນເຂົ້າໃນການເພີ່ມຜົນຜະລິດ ແລະ ລາຍຮັບໃນຄົວເຮືອນ. ຮູບພາບໂດຍ ©GIZ/ມາຣິອຸດ ຄະນິເຄີນເບີກ

| | |
|---|---|
| ຊື່ໂຄງການ | ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທຳລາຍປ່າໄມ້ (CliPAD) |
| ໃຫ້ທຶນໂດຍ | ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ສາທາລະນະລັດ ເຢຍລະມັນ (BMZ) ແລະ ກອງທຶນດິນຟ້າອາກາດສີຂຽວ |
| ເຂດເປົ້າຫມາຍຂອງໂຄງການ | ແຂວງ ຫົວພັນ, ໄຊຍະບູລີ, ຫລວງພະບາງ, ຫລວງນ້ຳທາ, ອຸດົມໄຊ ແລະ ບໍ່ແກ້ວ. |
| ຄູ່ຮ່ວມງານໂຄງການ | ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ |
| ໄລຍະເວລາ | ມັງກອນ 2019 - ມີນາ 2027 |

## ແນວທາງປະຕິບັດ

ດ້ວຍເງິນຈຳນວນ 51.1 ລ້ານເອີໂຣ ຈາກ ກອງທຶນດິນຟ້າອາກາດສີຂຽວ (GCF) ແລະ 11.5 ລ້ານເອີໂຣ ຈາກ BMZ, ໂຄງການ CliPAD ຈັດຕັ້ງປະຕິບັດໂຄງການຢູ່ 6 ແຂວງພາກເຫນືອ ຂອງ ສປປ ລາວ, ທີ່ແນໃສ່ ເພື່ອຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ໄດ້ 11.7 ລ້ານໂຕນກາກບອນ ($tCO_2eq$) ແລະ ປົກປັກຮັກສາປ່າໄມ້ໃຫ້ໄດ້ 2 ລ້ານເຮັກຕາ. ນອກຈາກຜົນປະໂຫຍດດ້ານສິ່ງແວດລ້ອມ, ໂຄງການກໍຍັງປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ສົ່ງເສີມຄວາມສະເຫມີພາບລະຫວ່າງຍິງ-ຊາຍ ດ້ວຍການໃຫ້ແມ່ຍິງສາມາດເຂົ້າເຖິງການຝຶກອົບຮົມ, ບົດບາດໃນການເປັນຜູ້ນຳ, ແລະ ໂອກາດໃນການຕັດສິນໃຈ ຢູ່ໃນການລິເລີ່ມການຄຸ້ມຄອງປ່າໄມ້.

ວຽກງານ REDD+ ແມ່ນວຽກງານຍຸດທະສາດຂອງລັດຖະບານແຫ່ງ ສປປ ລາວ ເພື່ອຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວແບບຍືນຍົງ.

ໂຄງການ CliPAD ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາບແວດລ້ອມ ທີ່ເອື້ອອຳນວຍແກ່ ການຈັດຕັ້ງປະຕິບັດວຽກງານ REDD+, ປະກອບມີ:

- ສົ່ງເສີມໃຫ້ມີຄວາມພ້ອມທາງການເງິນເພື່ອພັດທະນາວຽກງານການຄຸ້ມຄອງປ່າໄມ້.
- ທົບທວນ ແລະ ປັບປຸງແຜນວຽກກ່ຽວກັບນິຕິກຳ ແລະ ກົດລະບຽບຕ່າງໆ.
- ປັບປຸງການບັງຄັບໃຊ້ແຜນວຽກກ່ຽວກັບນິຕິກຳ ແລະ ກົດລະບຽບໃຫມ່ (ການຄຸ້ມຄອງ).

ນອກຈາກນີ້, ໂຄງການດັ່ງກ່າວ ຍັງສະຫນັບສະຫນູນການຜະລິດກະສິກຳທີ່ບໍ່ທຳລາຍປ່າໄມ້ ແລະ ກະສິກຳປ່າໄມ້, ໂດຍການ:

- ສົ່ງເສີມການຜະລິດກະສິກຳຂັ້ນບ້ານ.

- ເຮັດໃຫ້ຊາວບ້ານຜັນຂະຫຍາຍຜົນຜະລິດກະສິກຳຂອງຕົນເຂົ້າໃນຕ່ອງໂສ້ມູນຄ່າເພີ່ມ.
- ປັບປຸງການເຂົ້າເຖິງແຫລ່ງທຶນ ແລະ ການມີສ່ວນຮ່ວມຂອງພາກເອກະຊົນເພື່ອການຄຸ້ມຄອງປ່າໄມ້ໃຫ້ດີຂຶ້ນ ແລະ ການຫລຸດຜ່ອນການນຳໃຊ້ປ່າໄມ້ໃຫ້ຫນ້ອຍລົງ.

ນອກຈາກນີ້, ໂຄງການດັ່ງກ່າວຍັງສະຫນັບສະຫນູນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງປ່າໄມ້ ແລະ ການຟື້ນຟູພູມີທັດປ່າໄມ້ຢູ່ພື້ນທີ່ທີ່ດິນເສື່ອມໂຊມ ຫລາຍກວ່າ 1.5 ລ້ານເຮັກຕາ.

## ຜົນທີ່ໄດ້ຮັບ

ຮອດປີ 2025, ໂຄງການ CliPAD ໄດ້ຫລຸດຜ່ອນ ຂໍ້ຂັດແຍ່ງທາງດ້ານທີ່ດິນລົງ, ພ້ອມກັບຊຸມຊົນສາມາດນຳໃຊ້ ເຕັກນິກການປູກຝັງແບບຍືນຍົງ, ເພີ່ມຜົນຜະລິດ ແລະ ລາຍຮັບ ແລະ ສ້າງຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດຢູ່ພາກເຫນືອຂອງໃນ ສປປ ລາວ.

### ຫລຸດຜ່ອນຂໍ້ຂັດແຍ່ງທາງດ້ານທີ່ດິນ

ວຽກງານການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແລະ ແຜນຄຸ້ມຄອງປ່າໄມ້ບ້ານ (VFMP) ໄດ້ຫລຸດຜ່ອນຂໍ້ຂັດແຍ່ງກ່ຽວກັບຊາຍແດນໄດ້ຫລາຍກວ່າ 30% ແລະ ພ້ອມທັງປັບປຸງການຮ່ວມມືໃນການປ້ອງກັນໄຟໄຫມ້ລາມປ່າ ແລະ ການຟື້ນຟູປ່າໄມ້, ສົ່ງເສີມລະບົບການວັດແທກ, ການລາຍງານ ແລະ ການພິສູດຢັ້ງຢືນ (MRV).

### ປັບປຸງການຜະລິດກະສິກຳ

ໂດຍຜ່ານວຽກງານການສົ່ງເສີມການຜະລິດກະສິກຳແບບຍືນຍົງ, ກະສິກຳພາຍໃນຄົວເຮືອນຫລາຍກວ່າ 80% ແມ່ນໄດ້ນຳໃຊ້ລະບົບການຜະລິດ ແລະ ການສະຫນອງເຂົ້າຕ່ອງໂສ້ມູນຄ່າເພີ່ມທີ່ໄດ້ຮັບການປັບປຸງແລ້ວ. ວິທີທີ່ຍືນຍົງນີ້ ໄດ້ສົ່ງເສີມໃຫ້ຊຸມຊົນສາມາດເພີ່ມຜົນຜະລິດທາງກະສິກຳຫລາຍຂຶ້ນ ພ້ອມກັບ ເພີ່ມລາຍຮັບໃຫ້ກັບຄົວເຮືອນ.

### ເສີມສ້າງຄວາມສາມາດໃນການປັບຕົວກັບການປ່ຽນແປງສະພາບດິນຟ້າອາກາດ

ໂດຍຜ່ານການພັດທະນາກົນໄກທາງການເງິນ ພ້ອມທັງ ສົ່ງເສີມແຜນວຽກດ້ານນິຕິກຳ ແລະ ກົດລະບຽບຕ່າງໆ, ໂຄງການໄດ້ເສີມສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ ການຈັດຕັ້ງປະຕິບັດວຽກງານ REDD+ ແລະ ຫລຸດຜ່ອນອຸປະສັກໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ດ້ວຍເຫດນີ້, ປະຊາຊົນຫລາຍກວ່າ 270,000 ທ່ານ ໄດ້ຮັບຜົນປະໂຫຍດຈາກຄວາມສາມາດໃນການປັບຕົວກັບຜົນກະທົບຈາກການປ່ຽນແປງສະພາບອາກາດໄດ້ດີຂຶ້ນ ໂດຍຜ່ານການຄຸ້ມຄອງປ່າໄມ້ ແລະ ຊີວິດການເປັນຢູ່ທີ່ມີຄວາມຫລາກຫລາຍ.

### ການຟື້ນຟູລະບົບນິເວດປ່າໄມ້

ການຫລຸດຜ່ອນການເຮັດໄຮ່ເລື່ອຍລອຍເຮັດໃຫ້ປ່າໄມ້ໄດ້ຟື້ນຟູ, ເຊິ່ງເຮັດໃຫ້ຜະລິດຕະພັນເຄື່ອງປ່າຂອງດົງເພີ່ມຂຶ້ນ (NTFPs) 35%. ນີ້ຍັງໄດ້ສົ່ງເສີມຄວາມຫລາກຫລາຍທາງຊີວະນານາພັນ ແລະ ເສດຖະກິດພາຍໃນທ້ອງຖິ່ນ.

## ຄູ່ຮ່ວມພັດທະນາ

ໂຄງການ CliPAD, ໂດຍການຮ່ວມມືກັບ ລັດຖະບານ ແຫ່ງ ສປປ ລາວ, ເຮັດວຽກຄຽງຄູ່ກັບ ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາແຫ່ງສະຫະພັນສາທາລະນະລັດເຢຍລະມັນ, ອົງການຮ່ວມມືສາກົນແຫ່ງປະເທດຍີປຸ່ນ, ກອງທຶນສາກົນເພືອການພັດທະນາກະສິກຳ, ທະນາຄານພັດທະນາ KfW, ທະນາຄານໂລກ ແລະ ພາກເອກະຊົນ, ເຊີ່ງເປັນການຮ່ວມມືແບບເປີດກວ້າງ.



ສະມາຊິກພາຍໃນຊຸມຊົນປະກອບສ່ວນໃຫ້ສຽງກ່ຽວກັບວຽກງານກະສິກຳແບບຍືນຍົງ. ຮູບພາບໂດຍ ©GIZ/Chaykeo Bounphengphanh

ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນຫນຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງຫນ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ສາທາລະນະລັດ ເຢຍລະມັນ (BMZ). ໃນປັດຈຸບັນ, GIZ ກຳລັງສະຫນັບສະຫນູນບັນດາໂຄງການໃນ 4 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ, ຄ) ການພັດທະນາເສດຖະກິດແບບຍືນຍົງ ແລະ ງ) ວຽກງານການປົກຄອງທີ່ດີ.

ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງເວັບໄຊ https://www.giz.de/en/regions/asia/laos.


ຈັດພິມໂດຍ
Deutsche Gesel lschaft für
Internationale Zusammenarbeit (GIZ) GmbH

ສຳນັກງານຂຶ້ນທະບຽນທີ່ບອນ ແລະ ເອຈ໌ບອນ, ປະເທດ ເຢຍລະມັນ

ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທຳລາວປ່າໄມ້ (CliPAD)

ຊັ້ນ 5, ຕຶກພຣີມຽມ, ຖະຫນົນ ເສດຖະທິຣາດ, ຫນ່ວຍ 10, ບ້ານເພຍພັດ,
ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ.

ໂທ: +856 21 353605
ເວັບໄຊ: www.giz.de/laos (EN); www.giz.de/laos-la (LA)

ລົງວັນທີ
ເດືອນ ມິຖຸນາ, 2025

ອອກແບບໂດຍ
ຫນ່ວຍງານຂໍ້ມູນຂ່າວສານ, ອົງການ GIZ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ

ຮູບຖ່າຍໂດຍ
GIZ/ມາຣິອຸດ ຄະນິເຄີນເບີກ/ ໃຈແກ້ວ ບຸນເພັງພັນ

ຮຽບຮຽງໂດຍ
ທ່ານ ປ.ອ ເຢນ ຄາລາບິນສະກີ

ຕິດຕໍ່
ທ່ານ ປ.ອ ເຢນ ຄາລາບິນສະກີ (jens.kallabinski@giz.de)

ອົງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນໃນສິ່ງພິມນີ້.

ຕາງຫນ້າໃຫ້
ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ສາທາລະນະລັດ ເຢຍລະມັນ (BMZ)